# ກອງປະຊຸມ ຄົບຄະນະຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ ຄັ້ງທີ I ປະຈຳປີ 2023



ກອງປະຊຸມຄະນະກຳມະການຄຸ້ມຄອງຫຼັກຊັບ ຄັ້ງທີ I ປະຈຳປີ 2023, ໄດ້ໄຂຂຶ້ນຢ່າງເປັນທາງການ ໃນວັນທີ 21 ກຸມພາ 2023 ທີ່ຫ້ອງປະຊຸມ ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ໂດຍການໃຫ້ກຽດເປັນປະທານຂອງ ພະນະທ່ານ ສອນໄຊ ສີພັນດອນ ນາຍົກລັດຖະມົນຕີ, ປະທານຄະນະກຳມະການຄຸ້ມຄອງຫຼັກຊັບ, ທ່ານ ບຸນເຫຼືອ ສົນໄຊວໍຣະວົງ ຜູ້ວ່າການ ທຫລ, ຮອງປະທານຄະນະກຳມະການຄຸ້ມຄອງຫຼັກຊັບ, ຜູ້ປະຈຳການ, ບັນດາທ່ານຄະນະກຳມະການ, ຄະນະສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ປະທານສະພາບໍລິຫານ ແລະ ຜູ້ອຳນວຍການໃຫຍ່ ຕະຫຼາດຫຼັກຊັບລາວ ແລະ ພາກສ່ວນກ່ຽວຂ້ອງເຂົ້າຮ່ວມຢ່າງພ້ອມພຽງ.

ຈຸດປະສົງໃນການຈັດກອງປະຊຸມດັ່ງກ່າວ ແມ່ນເພື່ອປຶກສາຫາລືບາງໜ້າວຽກທີ່ສຳຄັນ ຕິດພັນກັບການເຄື່ອນໄຫວຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ. ໃນນີ້ໄດ້ຮັບຟັງການລາຍງານຜົນການເຄື່ອນໄຫວປະຈຳປີ 2022 ແລະ ທິດທາງໃນປີ 2023 ຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໂດຍ ທ່ານ ນາງ ຟອງຈິນດາ ແສງສຸລິວົງ, ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ສະພາບການເຄື່ອນໄຫວພື້ນເດັ່ນຂອງ ຕະຫຼາດຫຼັກຊັບລາວປະຈຳປີ 2022 ແລະ ທິດທາງແຜນການໃນປີ 2023 ໂດຍທ່ານ ສຸພັກ ຖິ່ນໄຊພອນ, ຜູ້ອຳນວຍການໃຫ່ຍ ຕະຫຼາດຫຼັກຊັບລາວ ຈາກນັ້ນ, ບັນດາທ່ານຄະນະກຳມະການ ແລະ ຜູ້ເຂົ້າຮ່ວມກໍ່ໄດ້ປະກອບຄຳຄິດເຫັນຕໍ່ເອກະສານດັ່ງກ່າວຢ່າງກົງໄປກົງມາ, ສ້າງສັນ ແລະ ເປັນປະໂຫຍດ, ຊຶ່ງເຮັດໃຫ້ກອງປະຊຸມໄດ້ມີຜົນສຳເລັດຕາມລະດັບຄາດໝາຍຢ່າງຈົບງາມ.

ຂ່າວ-ພາບ: ໜ່ວຍງານຂ່າວສານ

*ຢູ່ເມືອງລາວ ໃຊ້ເງິນກີບລາວ*